ກີບ ປີ 2013 ແລະ 19,77 ຕື້ກີບ ໃນປີ 2014 ພ້ອມນີ້ ໃນໄຕມາດ 1 ປີ 2015 ມີກຳໄລສຸດທິ 14,43 ຕື້ກີບ ແຕ່ໄຕມາດ 2 ຂອງປີດຽວກັນ ກຳໄລສຸດທິບໍ່ມີ (ຂາດທຶນ 1,1 ຕື້ກີບ), ການປະກາດຈ່າຍເງິນປັນຜົນ ປະຈຳ 6 ເດືອນທ້າຍປີ 2014 ລ່າຊ້າ ລວມທັງ ຜູ້ລົງທຶນຫຼັກທີ່ເຂົ້າມາເຄື່ອນໄຫວຊື້-ຂາຍຮຸ້ນດັ່ງກ່າວ ກໍ່ເບົາບາງ ແລະ ຂ່າວກ່ຽວກັບການນຳໃຊ້ເງິນສ່ວນເກີນຈາກມູນຄ່າທີ່ກຳນົດ (Share Premium) ທີ່ລະດົມທຶນຈາກການສະເໜີຂາຍຮຸ້ນສາມັນເພີ່ມທຶນໃຫ້ແກ່ມວນຊົນຄັ້ງທຳອິດ ເຂົ້າໃນການຊຳລະລາຍຈ່າຍເກີດຈາກການສະເໜີຂາຍຮຸ້ນດັ່ງກ່າວ ລວມທັງຄ່າໃຊ້ຈ່າຍກ່ຽວກັບການຈັດໂຄງສ້າງທຶນຂອງບໍລິສັດ ແລະ ການແບ່ງປັນເງິນດັ່ງກ່າວໃຫ້ແກ່ຜູ້ສ້າງຕັ້ງບໍລິສັດ.

ນອກຈາກສະພາບພາຍໃນຂອງບໍລິສັດຈົດທະບຽນແລ້ວ ສະພາບຕະຫຼາດຫຼັກຊັບໃນຕ່າງປະເທດ ເປັນຕົ້ນ ຕະຫຼາດຫຼັກຊັບ ຢູ່ ສ.ອາເມລິກາ, ຢູໂລໂຊນ, ອາຊີ ກໍ່ຄື ອາຊຽນ ກໍ່ມີທ່າອ່ຽງຫຼຸດ. ທ່າອ່ຽງຄືດັ່ງກ່າວນີ້ ກໍ່ໄດ້ມີຜົນຕໍ່ຕະຫຼາດຫຼັກຊັບລາວ ເຮັດໃຫ້ນັກລົງທຶນ ຍັງບໍ່ກ້າຕັດສິນໃຈລົງທຶນເນື່ອງຈາກກັງວົນຕໍ່ກະແສການຫຼຸດລົງຂອງຕະຫຼາດຫຼັກຊັບ ໃນພາກພື້ນ ແລະ ສາກົນ.

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະ ໃຫ້ທິດຊີ້ນຳຕາມທາງຄວນດ້ວຍ.

(ຮອງ) ຫົວໜ້າພະແນກຄຸ້ມຄອງຕະຫຼາດຫຼັກຊັບ

ບຸນຈິດ ກາງຍາ

13/9/2015

1. ເສັ້ນສະແດງດັດຊະນີ ແລະ ມູນຄ່າການຊື້-ຂາຍຮຸ້ນ ຢູ່ ຕລຊລ ແຕ່ຕົ້ນປີ 2015 ເຖິງປະຈຸບັນ (ວັນທີ 5/1/2015 – 21/8/2015).




2. ເສັ້ນສະແດງດັດຊະນີ ແລະ ລາຄາປິດຂອງຮຸ້ນຈົດທະບຽນ ຢູ່ ຕລຊລ ແຕ່ຕົ້ນປີ 2015 ເຖິງປະຈຸບັນ (ວັນທີ 5/1/2015 – 21/8/2015).

